ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 10 ຫາ 14 ເມສາ 2023









ຂະແໜງປູກຝັງ ແຂວງ ຫຼວງນໍ້າທາ ຈະສຸມໃສ່ ສ້າງຄອບຄົວຕົວແບບໃນການປູກພືດເປັນສິນຄ້າເພື່ອ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຂະແໜງປູກຝັງ ແຂວງ ຫຼວງນ້ຳທາ ຈະສຸມໃສ່ ສ້າງຄອບຄົວຕົວແບບໃນການ ປູກພືດເປັນສິນຄ້າເພື່ອສົ່ງອອກ ໄປ ສປ ຈີນ



ທ່ານ ມານິດ ແສງທອງຮັກ ຫົວໜ້າຂະແໜງປູກຝັງ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຫຼວງນ້ຳທາ ໃຫ້ຮູ້ວ່າ: ປັດຈຸບັນໃນການຈັດຕັ້ງດ້ານສຸຂານາໄມພືດ ຜ່ານມານີ້ພວກເຮົາ ກໍ່ເຄີຍປະສົບບັນຫາທີ່ວ່າຜູ້ປະກອບການບາງຫົວໜ່ວຍຍັງບໍ່ທັນມີເງື່ອນໄຂທີ່ຈະປູກພືດເປັນສິນຄ້າເພື່ອສົ່ງອອກ, ບໍ່ທັນຄົບເງື່ອນໄຂໄດ້ລິຂະສິດຜູ້ສົ່ງອອກພືດ, ບາງບໍລິສັດເປັນບໍລິສັດສ້າງຕັ້ງໃຫມ່ ຍັງບໍ່ທັນມີປະສົບການ, ຢູ່ໃນແຂວງຫຼວງນ້ຳທາ ບໍລິສັດທີ່ສົ່ງເສີມການປູກພືດເປັນສິນຄ້າຍັງບໍ່ທັນມີບໍລິສັດທີ່ເປັນຂອງຄົນລາວ ແທ້ໆສ່ວນຫຼາຍກໍ່ເປັນແມ່ນມີການຮ່ວມມືກັບບໍລິສັດຕ່າງປະເທດໂດຍສະເພາະ ສປ ຈີນ ເພາະເຂົາເຈົ້າຈະຮູ້ຂັ້ນຕອນ ແລະ ມີປະສົບການນີ້ຫຼາຍ ແລະ ມີຄວາມເຂົ້າໃຈດ້ານສຸຂານາໄມພືດຂອງການສົ່ງອອກພືດ ແລະ ນຳເຂົ້າບ້ານເຂົາເຈົ້າ.

ແຂວງ ຫຼວງນ້ຳທາ ໄດ້ປະຕິບັດຕາມອະນຸສັນຍາ ທີ່ທາງລັດຖະບານ ສປປ ລາວ ແລະ ລັດຖະບານ ສປ ຈີນໄດ້ເຊັນກັນຈຳນວນ 10 ສະບັບ ໃນນັ້ນມີ 16 ລາຍການພືດ ເຊິ່ງແຂວງຫຼວງນ້ຳທາ ໄດ້ຈັດຕັ້ງປະຕິບັດໄປແລ້ວ 50 ສ່ວນຮ້ອຍ ໂດຍ

ສະເພາະການປູກໝາກກ້ວຍຫອມ, ໝາກໂມ, ເຂົ້າສາລີ, ໝາກນອດ, ໝາກັ້ງງ, ໝາກນາວ ທີ່ວ່າທາງເຮົາໄດ້ມີການປູກແລ້ວ ແລະ ສົ່ງໄປຂາຍ ຢູ່ ສປ ຈີນ ຕາມອະນຸສັນຍາທີ່ໄດ້ຕົກລົງກັນ, ຕໍ່ກັບນັກລົງທຶນທີ່ຈະມາລົງທຶນການປູກຝັງຢູ່ແຂວງຫຼວງນ້ຳທາຂອງພວກເຮົານີ້ ໄດ້ມີນະໂຍບາຍ, ມີການກະຕຸກຊຸກຍູ້, ມີການປະສານງານຊ່ວຍຜູ້ປະກອບການ ທີ່ມາລົງທຶນ ເພື່ອປົກປ້ອງຜູ້ລົງທຶນ ແລະ ຜູ້ຜະລິດ ໂດຍສະເພາະ ເວລາຜູ້ລົງທຶນມາພົວພັນພວກເຮົາໄດ້ມີການແນະນຳພື້ນການຜະລິດໃຫ້ເຂົາເຈົ້າ, ຫຼັງຈາກໄດ້ພື້ນທີ່ການຜະລິດແລ້ວພວກເຮົາກໍ່ຫັນມາເປັນໂຄງການແຕ່ງຕັ້ງຄະນະກຳມະການຄຸ້ມຄອງ ສຶກສາສະພາບການຜະລິດຕົວຈິງ, ປັດໄຈການຜະລິດເປັນຕົ້ນແນວພັນ ຝຸ່ນປຸ່ຍ ແລະ ຢາປາບສັດຕູພືດທີ່ນຳເຂົ້າມາຮັບໃຊ້ການຜະລິດ ແລະ ເຄື່ອງກົນຈັກອຸປະກອນຈຳນວນໜຶ່ງ ເພື່ອຊ່ວຍຫຼຸດຜ່ອນຕົ້ນທຶນໂດຍພາຍຫຼັງເກັບກ່ຽວຜົນຜະລິດກໍ່ຈະໄດ້ມີການກວດກາ, ການລາຍງານ,ເພື່ອການເສຍພາສີອາກອນຕາມລະບຽບການຂັ້ນຕອນຂອງການສົ່ງອອກ.

ການປູກພືດເປັນສິນຄ້າເພື່ອສົ່ງອອກນີ້ ຂໍ້ສະດວກແມ່ນ ທາງພັກລັດຂອງເຮົາໄດ້ມີນະໂຍບາຍຕໍ່ຜູ້ປະກອບການທີ່ມາລົງທຶນປູກ ເປັນຕົ້ນການຍົກເວັ້ນພາສີອາກອນການນຳເຂົ້າແຕ່ຫຼັງຈາກຜົນຜະລິດໄດ້ສົ່ງອອກແລ້ວຈະຕ້ອງໄດ້ມີພັນທະພາສີອາກອນຕາມລະບຽບການ, ພະນັກງານຂັ້ນແຂວງຂັ້ນເມືອງໄດ້ມີການປະສານງານຊ່ວຍເຫຼືອຊຸກຍູ້ຊາວກະສິກອນເພື່ອເຮັດແນວໃດໃຫ້ໄດ້ຮັບຜົນຜະລິດ ທີ່ມີຄຸນນະພາບ ແລະ ສົ່ງອອກໃຫ້ໄດ້ລາຄາຕາມທ້ອງຕະຫຼາດທີ່ກຳນົດ, ເຊິ່ງຜ່ານມາໄດ້ມີການແຕ່ງຕັ້ງຄະນະກຳມະການລົງຊຸກຍູ້ການຜະລິດລະດູແລ້ງລະດູຝົນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ມີການຝຶກອົບຮົມໃຫ້ແກ່ພະນັກງານເມືອງ ແລະ ກຸ່ມຊາວກະສິກອນ ເພື່ອການປົວລະບັດປ້ອງກັນ ແລະ ຮັບມືກັບພະຍາດແມງໄມ້ສັດຕູພືດລະບາດ ຫາກຈຸດໃດມີການລະບາດກໍ່ຈະມີເຈົ້າໜ້າທີ່ ແລະ ໝໍພືດຂັ້ນບ້ານ ຂັ້ນເມືອງເປັນຜູ້ລາຍງານ ແລ້ວທີມງານຈະໄດ້ມີການກະກຽມການລົງໄປປ້ອງການການທຳລາຍສັດຕູພືດຊ່ວຍຊາວກະສິກອນ.

ຜ່ານມາຂະແໜງປູກຝັງແຂວງຍັງໄດ້ຮ່ວມກັບຫ້ອງການກະສິກຳ ແລະ ພັດທະນາຊົນນະບົດ ກິ່ງແຂວງ 12 ປັນນາ ແລະ ຊຽງຮຸ່ງ ສປ ຈີນ ທີ່ໄດ້ລົງມາຊ່ວຍເຫຼືອດ້ານເຕັກນິກຕ່າງໆ ໃນການປູກພືດເປັນຕົ້ນການທົດລອງແນວພັນສາລີ, ໄມ້ໃຫ້ໝາກຕ່າງໆເພື່ອການສົ່ງອອກ ຕິດພັນກັບຂໍ້ດີກໍ່ຍັງມີຂໍ້ຫຍຸ້ງຍາກເປັນຕົ້ນຄວາມຮູ້ຄວາມສາມາດຂອງຊາວກະສິກອນໃນການປູກພືດສົ່ງອອກຍັງຈຳກັດ ເປັນຕົ້ນແມ່ນດ້ານເຕັກນິກ ເຮັດແນວໃດເຮົາຈະສາມາດຜະລິດພືດໃຫ້ມີຄຸນນະພາບຍັງຈຳກັດຢູ່, ເລື່ອງເຕັກນິກປັດໄຈການຜະລິດແມ່ນນຳເຂົ້າເຮັດໃຫ້ຕົ້ນທຶນສູງ, ຊາວກະສິກອນມີຫຼາຍອາຊີບສ່ວນຫຼາຍແມ່ນໄດ້ຫັນໄປເຮັດແນວອື່ນຕາມໂຮງຈັກໂຮງງານໃນປະເທດໃກ້ຄຽງເຮັດໃຫ້ຂາດແຮງງານໃນການຜະລິດກະສິກຳເປັນສິນຄ້າ.

ເພື່ອເຮັດແນວໃດໃຫ້ປະຊາຊົນປູກພືດເພື່ອຄ້ຳປະກັນສະບຽງອາຫານ ແລະ ປູກພືດເພື່ອເປັນສິນຄ້ານີ້ໃຫ້ເປັນປົກກະຕິ ເພື່ອໃຫ້ຊີວິດຂອງຊາວກະສິກອນດີຂຶ້ນເທື່ອລະກ້າວໃນດ້ານການສ້າງລາຍຮັບ ແລະ ວຽກເຮັດງານທຳໃຫ້ຊາວກະສິກອນ, ພາຍໃນແຂວງຖ້າສົມທຽບໃສ່ແຕ່ກ່ອນການປູກພືດເປັນສິນຄ້າພາຍໃນແຂວງ ສະເລ່ຍສ້າງລາຍຮັບ 20-30 ລ້ານກີບ/ຄອບຄົວ. ໃນປູກພືດເປັນສິນຄ້າຢູ່ແຂວງຜ່ານມາ ຜູ້ມາລົງທຶນໄດ້ປະຕິບັດຕາມອະນຸສັນຍາການສົ່ງອອກພືດຢ່າງເຄັ່ງຄັດ, ມີການຢັ້ງຢືນພື້ນທີ່ສວນປູກ, ມີໂຮງເຮືອນຫຸ້ມຫໍ່, ລາຍຊື່ລິຂະສິດຜູ້ສົ່ງອອກເບື້ອງລາວ ແລະ ເບື້ອງ ສປ ຈີນ ໃນການສົ່ງອອກ, ເຊິ່ງໃນແຕ່ລະປີພວກເຮົາໄດ້ມີການສັງລວມບັນດາລາຍຊື່ບໍລິສັດທີ່ວ່າໄດ້ສົ່ງເສີມການປູກພືດເປັນສິນຄ້າຕົວຈິງ ວ່າບໍລິສັດໃດທີ່ເຮັດແທ້ທຳຈິງສາມາດຊຸກຍູ້ໃຫ້ເຂົາເຈົ້າມີລາຍຊື່ເປັນຜູ້ສົ່ງອອກເບື້ອງລາວ ແລະ ຢູ່ເບື້ອງ ສປ ຈີນ, ຕົວຢ່າງ ໂຄງການປູກຖົ່ວເຫຼືອງ ພວກເຮົາໄດ້ຈັດຕັ້ງປະຕິບັດ 1+4 ບໍລິສັດສຳປະທານ ເຊົ່າເນື້ອທີ່ນຳປະຊາຊົນໃນໄລຍະ 3-4



ເດືອນ, ແຮງງານເປັນຂອງປະຊາຊົນທັງໝົດຈົນຮອດເກັບກູ້ ແລະ ສົ່ງໂຮງງານ ປະຊາຊົນເປັນຜູ້ຂາຍແຮງງານໃຫ້ກັບລໍລິສັດ, ສ່ວນບໍລິສັດແມ່ນຈະເປັນການຫຼຸດຕົ້ນທຶນນໍາການເຂົ້າແຮງງານ ໃຊ້ແຮງງານພາຍໃນກວມ 80 ສ່ວນຮ້ອຍ ສ່ວນທີ່ເຫຼືອແມ່ນຊ່ຽວຊານຈາກຕ່າງປະເທດ 20 ສ່ວນຮ້ອຍ, ຄວາມໝາຍວ່າບໍລິສັດເປັນຜູ້ເຊົ່າເນື້ອທີ່ຂອງປະຊາຊົນ ແລະ ເປັນຜູ້ປູກ.

ເພື່ອສ້າງລາຍຮັບ ແລະ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ແຂວງຫຼວງນໍ້າທາໃນປີຕໍ່ໜ້າ ພວກເຮົາແມ່ນຢາກສ້າງຄອບຄົວຕົວແບບ ໂດຍມີແຜນຈະໃຫ້ໄດ້ ປະມານ 20-30 ຄອບຄົວ ຫຼື ເນື້ອທີ 20-50 ເຮັກຕາ ແລ້ວລົງທຶນໃຫ້ຊາວກະສິກອນເປັນຜູ້ປູກ ມີການຝຶກອົບຮົມເຕັກນິກຕ່າງໆໃຫ້ ຫຼັງຈາກນັ້ນໃຫ້ຊາວກະສິກອນຂາຍຜົນຜະລິດຂອງເຂົາເຈົ້າໃຫ້ແກ່ບໍລິສັດຜູ້ເກັບຊື້ ພວກເຮົາຈະໄດ້ເລັ່ງໃສ່ສົ່ງເສີມປະຊາຊົນເປັນຜູ້ເຮັດຕົວຈິງ ແລະ ໄດ້ຮັບຜົນປະໂຫຍດຢ່າງເຕັມສ່ວນ. ແຕ່ໄລຍະຜ່ານມານັ້ນເພື່ອເປັນການສ້າງຄວາມເຊື່ອໝັ້ນໃຫ້ຊາວກະສິກອນວ່າການປູກເພື່ອສົ່ງອອກນັ້ນສາມາດເຮັດໄດ້ ແລະ ເປັນການຖອດຖອນບົດຮຽນຈາກບໍລິສັດທີ່ມີປະສົບການໃຫ້ປະຊາຊົນໄດ້ເຫັນຕົວຈິງກ່ອນ ວ່າບົດຮຽນຂອງບໍລິສັດລົງທຶນແລ້ວຫຼາຍປານໃດ, ໄດ້ຜົນຜະລິດຊໍາໃດ ແລະ ຂາຍແລ້ວຈະໄດ້ຜົນປະໂຫຍດຫຼາຍຊໍາໃດ.

ຢາກຝາກເຖິງຊາວກະສິກອນ ແລະ ນັກລົງທຶນດ້ານການປູກຝັງ ທີ່ນອນໃນ ແຂວງ ຫຼວງນໍ້າທາ ຫາກວ່າມີຄວາມສົນໃຈໃນດ້ານນີ້ແມ່ນສາມາດມາພົວພັນນໍາຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງຂອງຕົນ, ຂະແໜງປູກຝັງ ຫຼື ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງຫຼວງນໍ້າທາ ພວກເຮົາມີຄວາມພ້ອມຊ່ວຍແນະນໍາຂັ້ນຕອນໃນການປະກອບເອກະສານ, ແນະນໍາຂັ້ນຕອນເຕັກນິກການລົງທຶນພາຍໃນແຂວງ ເພື່ອເຮັດແນວໃດໃຫ້ສາມາດສົ່ງພືດອອກໄດ້ ພວກເຮົາມີໜ່ວຍການວິຊາການຊ່ວຍດ້ານການແນະນໍາ ເພື່ອເຮັດເຂົາເຈົ້າມີຄວາມເຊື່ອໝັ້ນວ່າ ປູກແລ້ວຕ້ອງໄດ້ຂາຍ ຂາຍແລ້ວຕ້ອງມີລາຍຮັບ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;